ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ເລກທີ 1053/ຄພນ
ນະຄອນຫຼວງວຽງຈັນ, ວັນທີ 09 Aug 2011

ເຖິງ: ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.
ເລື່ອງ: ລາຍງານຂໍ້ມູນການຈ້າງງານ.

- ອີງຕາມ ແຈ້ງການກ່ຽວກັບການລາຍງານສະພາບລາຄາສິນຄ້າປະຈຳອາທິດ ແລະ ປະຈຳເດືອນ ສະບັບເລກທີ 1029/ອຄ.ຄພນ, ລົງວັນທີ 02/06/2011.

ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອເກັບກຳຂໍ້ມູນ "ການຈ້າງງານ" (ຕາຕະລາງ 4.3, 4.4 ແລະ 4.5 ໄດ້ຄັດຕິດມາພ້ອມນີ້) ຊຶ່ງແມ່ນຕາຕະລາງເພີ່ມເຕີມທີ່ໄດ້ກຳນົດໄວ້ໃນວັກສຸດທ້າຍ ຂໍ້1 ຂອງແຈ້ງການສະບັບເລກທີ 1029/ອຄ.ຄພນ, ລົງວັນທີ 02/06/2011:

1. ຕາຕະລາງ 4.5: ແມ່ນຕາຕະລາງເກັບກຳການຈ້າງງານໃນຂະແໜງການຄ້າຢູ່ໃນແຂວງ, ນະຄອນຫຼວງ ຊຶ່ງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ມີໜ້າທີ່ສັງລວມການລາຍງານຂອງບັນດາເມືອງພາຍໃນແຂວງຂອງຕົນ ເພື່ອລາຍງານໃຫ້ກົມການຄ້າພາຍໃນ ກ່ອນວັນທີ 20 ຂອງເດືອນທັນວາ.
2. ຕາຕະລາງ 4.4: ແມ່ນຕາຕະລາງເກັບກຳການຈ້າງງານໃນຂະແໜງການຄ້າພາຍໃນເມືອງ, ຊຶ່ງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ມີໜ້າທີ່ສັງລວມການລາຍງານຂອງບັນດາຫົວໜ່ວຍທຸລະກິດ, ຫ້າງຮ້ານຕ່າງໆທີ່ມີທະບຽນວິສາຫະກິດ ແລະ ບໍ່ມີທະບຽນວິສາຫະກິດ ເພື່ອລາຍງານໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ກ່ອນວັນທີ 15 ຂອງເດືອນທັນວາ.

   ສ່ວນຫ້າງຮ້ານທີ່ບໍ່ມີທະບຽນວິສາຫະກິດ ແມ່ນວິຊາການຂອງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງເປັນຜູ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອປະເມີນການຈ້າງງານໃຫ້ແທດເໝາະ ແລະ ໃກ້ຄຽງກັບຄວາມເປັນຈິງ.

3. ຕາຕະລາງ 4.3: ແມ່ນຕາຕະລາງການຈ້າງງານຂອງຫົວໜ່ວຍທຸລະກິດ, ຫ້າງຮ້ານຕ່າງໆ ທີ່ມີທະບຽນວິສາຫະກິດ ຈະຕ້ອງໄດ້ຈົດກ່າຍໃສ່ຕາຕະລາງ 4.3 ຕາມລາຍການລະອຽດຕົວຈິງ ເພື່ອລາຍງານໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ກ່ອນວັນທີ 5 ຂອງເດືອນທັນວາ.
4. ໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ເກັບສຳເນົາໃບລາຍງານການຈ້າງງານຂອງແຕ່ລະຫົວໜ່ວຍທຸລະກິດພາຍໃນເມືອງ ໄວ້ໃນແຟ້ມສະເພາະ ສຳລັບແຕ່ລະປີ .

4. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ເກັບສຳເນົາໃບລາຍງານການຈຳໜ່າຍສິນຄ້າຂອງແຕ່ລະເມືອງພາຍໃນແຂວງ ໄວ້ໃນແຟ້ມສະເພາະ ສຳລັບແຕ່ລະປີ.

5. ໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ເກັບສຳເນົາໃບລາຍງານການຈຳໜ່າຍສິນຄ້າຂອງແຕ່ລະຫົວ ໜ່ວຍທຸລະກິດພາຍໃນເມືອງ ໄວ້ໃນແຟ້ມສະເພາະ ສຳລັບແຕ່ລະປີ.

6. ລາຍການສິນຄ້າໃດ ຫາກເຫັນວ່າມີຄວາມຫຍຸ້ງຍາກໃນການຈັດເຂົ້າໃນໝວດສິນຄ້າ ແມ່ນໃຫ້ຈັດເຂົ້າໃນ ໝວດ XIX (ໝວດສິນຄ້າອື່ນໆ) ແຕ່ໃຫ້ຂຽນລາຍການນັ້ນລົງໃຫ້ລະອຽດ.

<u>ໝາຍເຫດ</u>:

- ໃຊ້ເຄື່ອງໝາຍຈຸດ ( , ) ເພື່ອສະແດງຫົວໜ່ວຍພັນ ເຊັ່ນ: ໜຶ່ງຮ້ອຍຫ້າສິບພັນກີບ ໃຫ້ຂຽນ 150,000 ກີບ.
- ໃຊ້ເຄື່ອງໝາຍຈ້ຳ ( . ) ເພື່ອສະແດງສ່ວນເລດເຊັ່ນ: ສອງຈຸດຫ້າສ່ວນຮ້ອຍ ໃຫ້ຂຽນ 2.5 %.
- ແຈ້ງການສະບັບນີ້ ປ່ຽນແທນແຈ້ງການສະບັບເລກທີ 1411/ອຄ.ຄພນ, ລົງວັນທີ 10 ທັນວາ 2010.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າກົມການຄ້າພາຍໃນ

ດຣ.ສົມພອງ ພຽນພັນໍ